ທຄຕລ BCEL
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສໍານັກງານໃຫຍ່

ເລກທີ: 2555 /ທຄຕລ. 2026
ນະຄອນຫຼວງວຽງຈັນ, ວັນທີ: 23 JUL 2026

# ໜັງສືແຈ້ງເຊີນປະມູນ

**ເຖິງ:** ບັນດາບໍລິສັດ ແລະ ວິສາຫະກິດ ຮັບເໝົາກໍ່ສ້າງ, ຕົບແຕ່ງ ແລະ ຜະລິດປ້າຍ ທີ່ນັບຖື.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາຜະລິດເຮືອນແດງຕູ້ ATM ແລະ CRM.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດ ແລະ ວິສາຫະກິດ ຮັບເໝົາກໍ່ສ້າງ, ຕົບແຕ່ງ ແລະ ຜະລິດປ້າຍ ກ່ຽວກັບການສະເໜີເງື່ອນໄຂ ແລະ ຂັ້ນຕອນໃນການປະກອບເອກະສານຍື່ນຊອງປະມູນລາຄາວຽກຜະລິດເຮືອນແດງ ATM ຈໍານວນ 43 ຫຼັງ ແລະ ເຮືອນແດງ CRM ຈໍານວນ 13 ຫຼັງ ຂອງ ທຄຕລ ລວມທັງໝົດ 56 ຫຼັງ. ພາຍຫຼັງຜະລິດສໍາເລັດ ແມ່ນນໍາສົ່ງຢູ່ ສາງໂພນທັນຂອງ ທຄຕລ ຕັ້ງຢູ່ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ໂດຍມີລາຍລະອຽດດັ່ງລຸ່ມນີ້:

## I. ລາຍການ ແລະ ສະເປັກ

### 1.1 ໂຄງສ້າງພື້ນຖານເຮືອນແດງ

- ຂະໜາດທັງໝົດຂອງເຮືອນແດງ 265h*140w*260d ເຮັດດ້ວຍແຜ່ນຄອມໂພສິດ Altex VS-022 ໜາ 04ມມ, ສີສັນຕາມເຕັກນິກ ແລະ ຄວາມຕ້ອງການຂອງ ທຄຕລ (ເຊິ່ງທຸກພາກສ່ວນຂອງໂຄງສ້າງພື້ນຕູ້ ແມ່ນເຊື່ອມຈອດກັນເປັນຊິ້ນສ່ວນດຽວກັນ;
- ປູພື້ນດ້ວຍແຜ່ນວີວ້າບອດ ໜາ 20ມມ ທັບດ້ວຍແຜ່ນອາລູມີນຽມລາຍຕີນໄກ່ ໜາ 02ມມ ຮັບນໍ້າໜັກ 200kg/$m^2$ ຂະໜາດ 120ຊມ*140ຊມ ພັບລົງລຸ່ມດ້ານໜ້າ;
- ເຮັດປ່ອງຫົ້ວໃສ່ຫຼັງຄາເຮືອນແດງ ຈໍານວນ 02 ອັນ ເພື່ອຍົກເວລາເຄື່ອນຍ້າຍ ແລະ ຕິດຕັ້ງ.

### 1.2 ສ່ວນຂອງຕູ້

- ເສົາສູງ 200ຊມ ທັງ 04 ດ້ານ ເຮັດດ້ວຍແຜ່ນເຫຼັກສາກ ໜາ 02ມມ ຂະໜາດ 20ຊມ*20ຊມ;
- ປະຕູດ້ານໜ້າ ເຮັດດ້ວຍແຜ່ນຄອມໂພສິດ Altex VS-022 ໜາ 04ມມ ຂະໜາດ 110ຊມ*200ຊມ, ເຈາະປ່ອງເຮັດຂອບບົວສີຂາວດ້ວຍເຫຼັກແຜ່ນໂຕນ ໜາ 02ມມ ຂະໜາດຂອບບົວ ໜາ 04ຊມ ພ້ອມທັງຕິດແຜ່ນສະຕິກເກີໃສ່ດ້ານໜ້າເຮືອນແດງຕາມແບບ ມີກຸນແຈລ໋ອກ ຈໍານວນ 02 ຊຸດ;
- ປະຕູດ້ານຫຼັງ ເຮັດດ້ວຍແຜ່ນຄອມໂພສິດ Altex VS-022 ໜາ 04ມມ ຂະໜາດ 110ຊມ*200ຊມ ມີກຸນແຈລ໋ອກ ຈໍານວນ 02 ຊຸດ;
- ຝາດ້ານຂ້າງຊ້າຍ ແລະ ຂວາ ເຮັດດ້ວຍແຜ່ນຄອມໂພສິດ Altex VS-022 ໜາ 04ມມ ຂະໜາດ 110 ຊມ*200ຊມ ພ້ອມເຮັດເປັນສະຕິກເກີຕິດໃສ່ແຜ່ນອາຄີລິກກັນນໍ້າ ແລະ ກັນຄວາມຮ້ອນ ໜາ 03ມມ ໃສ່ທັງ 02 ຂ້າງ;
- ຝາກັ້ນດ້ານຂ້າງເຮັດດ້ວຍແຜ່ນອາຄີລິກໃສ ໜາ 10ມມ ຂະໜາດ 110ຊມ*197ຊມ ຂອບເຮັດດ້ວຍໂຄງໂລສີຂາວ, ດ້ານລຸ່ມໃຫ້ມີປ່ອງລະບາຍອາກາດ 03 ຊມ ແລະ ໃສ່ໄລກອນເທິງ ແລະ ລຸ່ມ ສາມາດເປີດ-ປິດໄດ້;
- ຕິດສະໜວນກັນຄວາມຮ້ອນອ້ອມຮອບພາຍໃນເຮືອນແດງ;
- ເຈາະຮູວົງມົນເພື່ອແລ່ນສາຍໄຟເຂົ້າໃນເຮືອນແດງ 01 ຮູ ຂະໜາດເສັ້ນຜ່າກາງ 04 ຊມ;

(ທັງໝົດນີ້ແມ່ນປະກອບກັນເປັນ 01 ຊິ້ນສ່ວນ)



ເລກທີ 01, ຖະໜົນ: ປາງຄໍາ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

- ຜະລິດປ້າຍຫົວດ້ານໜ້າ ຂະໜາດ 50ຊມ*140ຊມ ເຮັດດ້ວຍແຜ່ນຄອມໂພສິດ SA-001 (Pure White) ໜາ 04ມມ ເປັນມູມໂຄ້ງເທິງ ແລະ ລຸ່ມ (ມູມໂຄ້ງ R=08ຊມ) ພ້ອມທັງເຮັດຮ່ອງກັນນ້ຳຝົນໄຫຼເຂົ້າໃນ ກວ້າງ 1.5ຊມ, ເລິກ 01ຊມ ແລະ ຕິດສະຕິກເກີສີແດງທັບ ສຳລັບໂລໂກ BCEL ແລະ ໂຕໜັງສື ATM 24/7 ເຮັດເປັນນູນດ້ວຍແຜ່ນອາຄີລິກໜາ 03ມມ ຂອບຊຶ້ງ ແລ່ນໄຟໃສ່ທາງໃນ;
- ຜະລິດປ້າຍຫົວດ້ານຂ້າງທັງສອງຂ້າງ ຂະໜາດ 50ຊມ*240ຊມ ເຮັດດ້ວຍແຜ່ນຄອມໂພສິດ SA-001 (Pure White) ໜາ 04ມມ ແລະ ຕິດສະຕິກເກີສີແດງທັບ ສຳລັບໂລໂກ BCEL ແລະ ໂຕໜັງສື ATM 24/7 ເຮັດເປັນນູນດ້ວຍແຜ່ນອາຄີລິກໜາ 03ມມ ຂອບຊຶ້ງ ແລ່ນໄຟໃສ່ທາງໃນ;

(ທັງໝົດນີ້ແມ່ນປະກອບກັນເປັນ 01 ຊິ້ນສ່ວນ)

- ເຮັດຖ້ານເຫຼັກຍອງອຸປະກອນໄວ້ໃນເຮືອນຕູ້ ຂະໜາດ 30ຊມ*50ຊມ ຈອດຕິດກັບເຮືອນແດງຕູ້;
- ເຮັດຕັ່ງເກົ້າເຫຼັກ 03 ຊັ້ນ ຂະໜາດ 30ຊມ*50ຊມ ແລະ ສູງ 100ຊມ.

## II. ວຽກກລະບົບໄຟ

- ລູກ CB Schneider 2P 63A ຈຳນວນ 05 ລູກ;
- ຕູ້ໂຫຼດ Schneider 2P 04 ຊ່ອງ ຈຳນວນ 01 ໜ່ວຍ
- ກ່ອງລອຍ 4*4 ຍີ່ຫໍ້ PANASONIC ຈຳນວນ 01 ກ່ອງ;
- ບອກແຈກ 4*4 ຈຳນວນ 01 ອັນ;
- ສາຍ VCT 2*1.5 ຍີ່ຫໍ້ BANKKOK ຈຳນວນ 30M;
- ສາຍ VCT 2*4.0 ຍີ່ຫໍ້ BANKKOK ຈຳນວນ 6M;
- ສະວິກແສງ ຈຳນວນ 01 ອັນ;
- ໜ້າກາກ 6T ຍີ່ຫໍ້ PANASONIC ຈຳນວນ 01 ອັນ;
- ປັກກາວຄູ່ PANASONIC ແທ້ ຈຳນວນ 02 ລູກ;
- ສາຍໄຟ THW 1*4 ສີຂຽວ ຈຳນວນ 06M;
- ດອກໄຟມົນ LED ຍີ່ຫໍ້ PANASONIC 13W ຈຳນວນ 02 ຊຸດ;
- TIMER 220V ຈຳນວນ 01 ຊຸດ ແລະ Room Thermometer ຈຳນວນ 01 ຊຸດ;
- ພັດລົມດູດອາກາດ ຂະໜາດ 06 ນິ້ວ ຈຳນວນ 04 ໜ່ວຍ.

## III. ເງື່ອນໄຂການປະກອບເອກະສານການປະມູນ

### 3.1 ເອກະສານຊອງທີ 1 (ບໍ່ປິດຊອງ)

1) ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຖືກຕ້ອງຕາມກົດໝາຍຂອງ ສປປ ລາວ ແລະ ບໍ່ມີຄະດີ (ສຳເນົາໃບທະບຽນວິທະສາຫະກິດ, ໃບຢັ້ງຢືນການເສຍອາກອນ ປີ 2024/2025 ແລະ ໃບອະນຸຍາດດຳເນີນທຸລະກິດ);
2) ເອກະສານກ່ຽວກັບມາດຕະຖານເຕັກນິກ ແມ່ນໃຫ້ລະບຸຄົບຖ້ວນກ່ຽວກັບວັດສະດຸທີ່ຈະຜະລິດ, ສະຖານທີ່ຜະລິດສິນຄ້າ, ກຳນົດເວລາສົ່ງເຄື່ອງ ແລະ ການຮັບປະກັນສິນຄ້າ;
3) ຄຸນວຸດທິຂອງບໍລິສັດ ແລະ ປະສົບການທີ່ເຮັດວຽກດັ່ງກ່າວ ຫຼື ວຽກທີ່ຄ້າຍຄືລັກສະນະດຽວກັນຢ່າງໜ້ອຍ 03 ໂຄງການ;
4) ກຳນົດຍື່ນຊອງມາດຕະຖານເຕັກນິກ ຈະປິດຮັບວັນທີ **26/08/2026** ເວລາ **15:30 ໂມງ** ທີ່ພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ສຳນັກງານໃຫຍ່ ທີ່ປ່ອງຂາອອກ-ຂາເຂົ້າ ອາຄານ C ຊັ້ນ 4;

**3.2 ເອກະສານຊອງທີ 2 (ປິດຊອງ)**

1) ໃບສະເໜີລາຄາໃຫ້ລະບຸລາຄາລວມອາກອນມູນຄ່າເພີ່ມ ທັງໝົດເປັນສະກຸນເງິນກີບ ໃຫ້ຄົບຖ້ວນ;
2) ໃນວັນທີ **01/09/2026** ເວລາ **13:30** ໂມງ ແມ່ນມື້ເປີດຊອງປະມູນ ແຈ້ງໃຫ້ບໍລິສັດ ແລະ ວິສາຫະກິດ ຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມອາຄານ C ຊັ້ນ 5 ຫ້ອງ 5/2;
3) ຜູ້ສະໜອງ ຕ້ອງວາງເງິນຄໍ້າປະກັນການປະມູນຕໍ່າສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄໍ້າປະກັນທີ່ອອກໃຫ້ໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄໍ້າປະກັນຕ້ອງເຖິງວັນທີ 31/12/2026) ຫຼື ແຊັກທີ່ວີຊ່າແລ້ວ (ທຄຕລ ບໍ່ຮັບເງິນສົດ) ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄໍ້າປະກັນດັ່ງກ່າວຄືນ, ສໍາລັບຜູ້ຊະນະການປະມູນແມ່ນຈະສົ່ງຄືນພາຍຫຼັງເຊັນສັນຍາສໍາເລັດ.

## IV. ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ຊະນະການປະມູນ

1) ຖ້າຜູ້ຊະນະການປະມູນ ຫາກປະຕິເສດການເຊັນສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ;
2) ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທໍານຽມໃນການຈົດທະບຽນສັນຍາ, ທະບຽນຊັບສິນ ແມ່ນຄວາມຮັບຜິດຊອບຂອງຜູ້ສະໜອງ;
3) ພາຍຫຼັງຜະລິດສໍາເລັດແມ່ນໃຫ້ຫຸ້ມຫໍ່ດ້ວຍຜ້າຢາງ ຮັບປະກັນບໍ່ໃຫ້ຖືກນໍ້າຝົນ;
4) ຜູ້ຊະນະການປະມູນຕ້ອງຮັບປະກັນສິນຄ້າໄລຍະເວລາ 01 ປີ ກໍລະນີມີບັນຫາຕ້ອງຮັບຜິດຊອບສ້ອມແປງແກ້ໄຂຄືນໃຫ້ ທຄຕລ ພາຍໃນໄລຍະເວລາຄໍ້າປະກັນ (ທຄຕລ ມີແຜນຈັດສົ່ງໃຫ້ທຸກສາຂາທົ່ວປະເທດ).

## V. ການຜະລິດ ແລະ ການຊໍາລະ

**5.1 ການຜະລິດແບ່ງເປັນ 02 ຄັ້ງ (ທຄຕລຈະເຮັດໜັງສືສັ່ງວຽກໃຫ້ແຕ່ລະຄັ້ງ)**

1) ຄັ້ງທີ 01 ຜະລິດຈໍານວນ 28 ຫຼັງ;
2) ຄັ້ງທີ 02 ຜະລິດຈໍານວນ 28 ຫຼັງ.

**5.2 ການຊໍາລະແບ່ງເປັນ 03 ງວດ/ຄັ້ງ**

1) ງວດທີ 01: ຊໍາລະ 50% ຂອງມູນຄ່າ ຈໍານວນ 28 ຫຼັງ ພາຍຫຼັງປະຕິບັດວຽກສໍາເລັດ 50% ຂອງຈໍານວນ 28 ຫຼັງ ໂດຍໄດ້ຮັບການກວດວຽກຈາກຄະນະກໍາມະການຕິດຕາມກວດກາ ຫຼື ຄະນະກໍາມະການກ່ຽວຂ້ອງ ທຄຕລ;
2) ງວດທີ 02: ຊໍາລະ 40% ຂອງມູນຄ່າ ຈໍານວນ 28 ຫຼັງ ພາຍຫຼັງປະຕິບັດວຽກ 100% ຂອງຈໍານວນ 28 ຫຼັງ ໂດຍໄດ້ຮັບການກວດວຽກຈາກຄະນະກໍາມະການຕິດຕາມກວດກາ ຫຼື ຄະນະກໍາມະການກ່ຽວຂ້ອງ ທຄຕລ ແລະ ຈັດສົ່ງສິນຄ້າຮອດສາງຂອງ ທຄຕລ ສໍາເລັດ;
3) ງວດທີ 03: ຊໍາລະເງິນຄໍ້າປະກັນຄຸນນະພາບ ທີ່ຫັກໄວ້ 10% ຂອງມູນຄ່າທັງໝົດ ຈໍານວນ 28 ຫຼັງ ໄລຍະ 01 ປີ ນັບແຕ່ມື້ມອບ-ຮັບ ສິນຄ້າເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

ລຊ **ຜູ້ອໍານວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ບັນທະລາດ ແກ້ວປະເສີດ

**ຜູ້ປະສານງານ:**

1) ທ່ານ ພູວອນ ສໍອິນໄຊ 020 5955 9889
2) ທ່ານ ສັນຍາໄຊ ພົມຍະວົງ 020 2222 4446
3) ທ. ຄໍາຫຼ້າ ເພັດມີໄຊ 020 7777 7096

1. **ຮູບແບບຕູ້ ATM ຕັ້ງພາຍນອກອາຄານແບບຕູ້ດ່ຽວ** (Outdoor):
   - ລາຍລະອຽດ




260 cm
ມຸມໂຄ້ງ R= 8 ຊມ
ໂລໂກ້ໄຟ ແລະ ນູນ
ໜັງສືໄຟ ແລະ ນູນ
ATM
BCEL
100 cm
140 cm
190 cm
10 cm
ແຜນຂ້າງອາຄິລິກ
ຕິດສະຕິກເກີຜະລິດຕະພັນ
140 cm
100 cm
20 cm
ຮ່ອງກັນນ້ຳໄຫຼເຂົ້າ
ດ້ານໃນມຸມໂຄງ

2. **ຮູບແບບຕູ້ CRM ຕັ້ງພາຍນອກອາຄານແບບຕູ້ດ່ຽວ** (Outdoor):

- ລາຍລະອຽດ




ມຸມໂຄ້ງ R= 8 ຊມ
260 cm
ໜັງສືໄຟ ແລະ ນູນ
ໂລໂກ້ໄຟ ແລະ ນູນ
BCEL
CRM
190 cm
10 cm
100 cm
140 cm
CRM
ແຜນຂ້າງອາຄິລິກ
ພິດສະຕິກເກີຜະລິດຕະພັນ
140 cm
100 cm
20 cm
ຮ່ອງກັນນ້ຳໄຫຼເຂົ້າ
ດ້ານໃນມຸມໂຄງ